ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
======00000======

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0221/ກປ. 2000.
ວຽງຈັນ, ວັນທີ 13 OCT 2000

# ລະບຽບການ
## ວ່າດ້ວຍ ການຄຸ້ມຄອງ ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້

- ອີງຕາມ ກົດໝາຍ ປ່າໄມ້ ສະບັບ ເລກທີ 01- 96; ລົງວັນທີ 11/10/96.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້ ສະບັບ ເລກທີ 198/ນຍ; ລົງວັນທີ 15/11/1999.

ເພື່ອເຮັດໃຫ້ວຽກງານ ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສອດຄ່ອງກັບ ເນື້ອໃນຈິດໃຈ ຂອງກົດໝາຍປ່າໄມ້.

ລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້ ອອກລະບຽບ :

## ພາກທີ I
## ບົດບັນຍັດທົ່ວໄປ

<u>ມາດຕາ 1</u> : ຈຸດປະສົງ

ຈຸດປະສົງ ຂອງລະບຽບການ ຄຸ້ມຄອງ ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ສະບັບນີ້ ແນໃສ່ ເພື່ອ :

1. ຮັບປະກັນ ເຮັດໃຫ້ວຽກງານ ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ສາມາດ ຕອບສະໜອງວັດຖຸດິບ ໃຫ້ແກ່ ບັນດາໂຮງງານປຸງແຕ່ງ ໄດ້ຢ່າງສະໝ່ຳສະເໝີ ແລະ ມີຄຸນນະພາບ, ມີການນຳໃຊ້ ເຕັກນິກ ວິຊາການ ຢ່າງຖືກຕ້ອງ, ມີການພັດທະນາ ເສດຖະກິດສັງຄົມ ແບບໝັ້ນຄົງ ທັງປົກປັກຮັກສາ ສິ່ງແວດລ້ອມ ເຮັດໃຫ້ການສືບພັນ ຂອງ ປ່າໄມ້ ມີຕະຫລອດໄປ ແລະ ເພື່ອເປັນ ການປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມອຸດົມສົມບູນ ແລະ ໝັ້ນຄົງຕະຫລອດໄປ.
2. ຮັບປະກັນ ໃຫ້ການລົງທຶນ ຂອງບຸກຄົນ ແລະ ການຈັດຕັ້ງ ເຂົ້າໃນ ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ໄດ້ຮັບຜົນປະໂຫຍດ ຢ່າງສົມເຫດສົມຜົນ.

<u>ມາດຕາ 2</u> : ນິຍາມ

<u>ໄມ້</u> : ແມ່ນ ໄມ້ທຸກຊະນິດ ທີ່ຍັງຢືນຕົ້ນ ຫຼື ລົ້ມລົງ ແລະ ໃຫ້ຄວາມໝາຍລວມ ທັງຮາກ, ປູດ, ຕໍ, ກິ່ງ, ງ່າ, ເຫງົ້າ ຫຼື ສ່ວນໃດໜຶ່ງ ຂອງໄມ້ ບໍ່ວ່າຈະຖືກຕັດ, ຟັນ, ເລື່ອຍ, ຜ່າ, ຖາກ, ຂຸດ, ບັ່ນທ່ອນ ຫຼື ຖືກກະທຳ ໂດຍວິທີການ ອື່ນ ໆ.

<u>ຜະລິດຕະພັນປ່າໄມ້</u> : ແມ່ນ ເຄື່ອງປ່າຂອງດົງ ປະເພດຕ່າງໆ ທີ່ເກີດຂຶ້ນ ຢູ່ໃນປ່າທຳມະຊາດ ຊຶ່ງ ອາດຈະເປັນຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງໄມ້, ເຫັດ, ນ້ຳເຜີ້ງ ແລະ ອື່ນໆ.

<u>ຜະລິດຕະພັນປ່າໄມ້ ທີ່ບໍ່ຂຶ້ນກັບລະດູການ</u> : ແມ່ນ ປະເພດເຄື່ອງປ່າຂອງດົງທີ່ສາມາດຂຸດຄົ້ນໄດ້ ໃນ ທຸກໆລະດູການເຊັ່ນ: ຫວາຍ, ໄມ້ປ່ອງ, ນ້ຳມັນຍາງ, ຢາງແປກ, ເປືອກບົງ, ຮາກ, ເຄືອ ແລະ ອື່ນໆ.

<u>ຜະລິດຕະພັນປ່າໄມ້ທີ່ຂຶ້ນກັບລະດູການ</u> : ແມ່ນ ປະເພດເຄື່ອງປ່າຂອງດົງ ທີ່ສາມາດຂຸດຄົ້ນ ຫລື ເກັບກູ້ໄດ້ ເປັນແຕ່ລະໆດູ ເຊັ່ນ: ປະເພດໃຫ້ດອກ, ໃຫ້ໝາກ, ປະເພດໜໍ່ໄມ້, ເຫັດ ແລະ ອື່ນໆ.

<u>ປ່າຜະລິດ</u> : ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້, ຊຶ່ງຖືກຈັດແບ່ງ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງ ການພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ຊີວິດການເປັນຢູ່ ຂອງ ປະຊາຊົນບັນດາເຜົ່າ ດ້ານໄມ້ ແລະ ຜະລິດຕະພັນປ່າໄມ້ ຢ່າງເປັນປົກກະຕິ ຕະຫລອດໄປ.

<u>ການຂຸດຄົ້ນໄມ້</u> : ແມ່ນ ການເຄື່ອນໄຫວ ກິດຈະກຳ ກ່ຽວກັບ ປ່າໄມ້ ເຊິ່ງເລີ້ມແຕ່ ຂອດການສຳຫຼວດ ຈັດສັນ, ສຳຫລວດ ວາງແຜນການຂຸດຄົ້ນ, ການໝາຍຕົ້ນໃຫ້ຕັດ, ການຕັດ ປ້ຳໄມ້, ການບັ່ນທ່ອນໄມ້, ການຊັກລາກໄມ້ທ່ອນ, ການລວມໝອນໄມ້ທ່ອນ ຢູ່ສະໜາມ I, ການວັດແທກ ຂຶ້ນບັນຊີໄມ້ ຢູ່ສະໜາມ II ແລະ ການເຄື່ອນຍ້າຍ ຂົນສົ່ງໄມ້ ແຕ່ສະໜາມ II ໄປຫາ ສະໜາມ III ຫຼື ສະໜາມໂຮງງານປຸງແຕ່ງໄມ້.

<u>ການອະນຸຍາດ ຂຸດຄົ້ນໄມ້</u> : ແມ່ນ ການໃຫ້ສິດ ດຳເນີນ ກິດຈະການ ຂຸດຄົ້ນໄມ້ ໃຫ້ແກ່ ບຸກຄົນ ຫຼື ການຈັດຕັ້ງໃນເນື້ອທີ່ປ່າໄມ້ໃດໜຶ່ງ.

<u>ຄ່າພັນທະ ປູກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ</u> : ແມ່ນ ຄ່າພັນທະ ທີ່ມາຈາກ ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ຕ້ອງຈ່າຍໃຫ້ລັດ ກ່ອນການຂຸດຄົ້ນ ຕາມ ອັດຕາ ທີ່ລັດ ໄດ້ກຳນົດອອກ ໂດຍມີ ຈຸດປະສົງ ສະເພາະ ນຳໃຊ້ ເຂົ້າໃນ ການຟື້ນຟູບູລະນະ ປ່າໄມ້, ການປູກໄມ້, ການບົວລະບັດຮັກສາ ປ່າປູກ ແລະ ການປົກປັກຮັກສາ ປ່າໄມ້.

<u>ຄ່າຊັບພະຍາກອນປ່າໄມ້</u> : ແມ່ນ ຄ່າພັນທະມາຈາກ ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ອະນຸຍາດ ໃຫ້ນຳໃຊ້ໄມ້ ເປັນຜູ້ຈ່າຍໃຫ້ລັດ ຕາມ ອັດຕາຄິດໄລ່ ທີ່ລັດເປັນຜູ້ກຳນົດອອກ, ຄ່າຊັບພະຍາກອນ ຕ້ອງຊຳລະ ກ່ອນການເຄື່ອນຍ້າຍໄມ້ ອອກຈາກສະໜາມ II ເພື່ອນຳເຂົ້າ ງົບປະມານ ແຫ່ງຊາດ.

**ແຜນການ ຄຸ້ມຄອງ ໄລຍະຍາວ** : ແມ່ນ ເອກະສານໜຶ່ງ ທີ່ກຳນົດອອກ ສຳລັບ ປ່າຜະລິດ ແຕ່ລະຕອນ ບົນພື້ນຖານ ຂອງ ການສຳຫລວດ ຈັດສັນ. ແຜນການຄຸ້ມຄອງ ໄລຍະຍາວ ຈະກຳນົດ ການແບ່ງປ່າຜະລິດ ອອກເປັນປະເພດຕ່າງໆ, ການແບ່ງເນື້ອທີ່ປ່າ ອອກເປັນ ດອນ, ອາຍຸຮອບວຽນ, ປະເມີນ ບໍລິມາດ ທີ່ອະນຸຍາດ ໃຫ້ຕັດອອກ ແຕ່ລະປີ ພ້ອມກັບ ແຜນທີ່ ເສັ້ນທາງຂຸດຄົ້ນ, ເສັ້ນທາງຂົນສົ່ງໄມ້, ສະໜາມໄມ້ ແລະ ອື່ນໆ.

**ແຜນການຂຸດຄົ້ນ** : ແມ່ນ ເອກະສານ ທີ່ໃຊ້ເປັນບ່ອນອີງ ໃນການດຳເນີນ ວຽກງານການຂຸດຄົ້ນໄມ້ ໂດຍ ໄດ້ກຳນົດເຖິງຈຸດປະສົງ, ລະບົບເຕັກນິກ ການຂຸດຄົ້ນ, ຂອບເຂດເນື້ອທີ່, ກຳນົດເວລາ ບໍລິມາດໄມ້ ທີ່ຈະຂຸດຄົ້ນ, ຈຳນວນ ແລະ ປະເພດ ຂອງ ອຸປະກອນກົນຈັກ ການຂຸດຄົ້ນ, ຄວາມຕ້ອງການ ທາງດ້ານ ການເງິນ ແລະ ແຮງງານ, ມາດຕະການໃນການຟື້ນຟູ ບູລະ ນະປ່າ ແລະ ການປະເມີນຜົນກະທົບ ທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ.

**ການຂຸດຄົ້ນໄມ້ແບບຕັດກ້ຽງ** : ແມ່ນ ການຂຸດຄົ້ນໄມ້ທຸກຕົ້ນ ອອກຈາກ ປ່າປູກ, ປ່າທຳມະຊາດ ແລະ ເນື້ອທີ່ດິນປ່າໄມ້ ທີ່ລັດຖະບານ ອະນຸຍາດ ໃຫ້ຫັນປ່ຽນໄປຮັບໃຊ້ ຈຸດປະສົງອື່ນ ເຊັ່ນ : ອ່າງເກັບນ້ຳ ເຂື່ອນໄຟຟ້າ, ແລວທາງ, ແລວສາຍໄຟຟ້າ, ຄອງຊົນລະປະທານ, ເຂດບຸກ ເບີກ ເນື້ອທີ່ ການຜະລິດ ກະສິກຳ, ເດີ່ນບິນ, ນິຄົມອຸດສາຫະກຳ, ເຂດຂຸດຄົ້ນບໍ່ແຮ່ ແລະ ສະຖານທີ່ ສາທາລະນະ ອື່ນ ໆ.

**ການຂຸດຄົ້ນໄມ້ແບບຕັດຍອນ** : ແມ່ນການເລືອກຕັດຕົ້ນໄມ້ຈຳນວນໃດໜຶ່ງອອກຈາກເນື້ອທີ່ປ່າໄມ້ ແບບມີປະສິດທິຜົນ ຕາມແຜນສຳຫຼວດຈັດສັນ ແລະ ສຳຫຼວດຂຸດຄົ້ນຊຶ່ງມີຈຸດປະສົງ ສຳຄັນ ໃນ ການປັບປຸງສະພາບປ່າ ແລະ ຊະນິດພັນໄມ້ ໃຫ້ເຕີບໂຕໄວ ແລະ ມີຄຸນນະພາບດີ.

**ການໝາຍຕົ້ນຕັດ** : ແມ່ນ ການໝາຍຕົ້ນໄມ້ ທີ່ຖືກຕ້ອງ ຕາມ ອະນຸຍາດຕັດຟັນ, ໄມ້ເກີນອາຍຸ ກະສຽນ ແລະ ໄມ້ທີ່ບໍ່ຖືກກຳນົດ ໃຫ້ເປັນຕົ້ນແມ່ພັນ ໂດຍ ໃຊ້ຄ້ອນກາ, ນ້ຳສີ ແລະ ອື່ນໆ ຊຶ່ງເປັນເຄື່ອງໝາຍ ຊີ້ບອກໃຫ້ຮູ້ວ່າ ຕົ້ນໄມ້ຈຳນວນ ດັ່ງກ່າວນີ້ ຈະຖືກຕັດອອກ ຈາກ ເນື້ອທີ່ ປ່າ ຕາມ ແຜນການສຳຫຼວດຂຸດຄົ້ນ.

**ການຕັດປ້ຳ** : ແມ່ນ ການຕັດຕົ້ນໄມ້ ໃຫ້ລົ້ມລົງ ຕາມ ທິດ ທີ່ໄດ້ກຳນົດໄວ້.

**ການບັ່ນທ່ອນ** : ແມ່ນ ການຕັດລຳຕົ້ນ ຫຼື ງ່າ ຂອງ ຕົ້ນໄມ້ ໃຫ້ຂາດອອກ ເປັນທ່ອນ ຖືກຕ້ອງ ຕາມ ຂະໜາດ ມາດຕະຖານເຕັກນິກ ແລະ ຄວາມຕ້ອງການຂອງຕະຫຼາດ ທີ່ໄດ້ກຳນົດໄວ້ ເພື່ອ ໃຫ້ໄດ້ບໍລິມາດ ແລະ ຄຸນນະພາບສູງສຸດຂອງຕົ້ນໄມ້ ທີ່ຖືກຕັດປ້ຳລົງ ພ້ອມທັງ ສະດວກ ໃນ ການຊັກລາກ ແລະ ຂົນສົ່ງ.

**ສະໜາມ I** : ແມ່ນ ສະຖານທີ່ ທ້ອນໂຮມໄມ້ ທີ່ໄດ້ຜ່ານ ການໝາຍ ເບີຕົ້ນ ແລະ ເບີທ່ອນ ເປັນທີ່ ຮຽບຮ້ອຍແລ້ວ ຊຶ່ງໄດ້ຊັກລາກ ຈາກ ບ່ອນຕັດປ້ຳ ມາລວມໝອນໄວ້ ຕາມ ແຜນການ ຂຸດຄົ້ນ ທີ່ໄດ້ກຳນົດໄວ້.

**ສະໜາມ II** : ແມ່ນ ສະຖານທີ່ທ້ອນໂຮມໄມ້ ທີ່ໄດ້ຂົນສົ່ງມາຈາກ ສະໜາມ I ຊຶ່ງສາມາດ ຕອບສະໜອງ ໃຫ້ແກ່ ການຂົນສົ່ງ ໄປຫາ ສະໜາມ III ໄດ້ຕະຫລອດປີ, ຫ່າງໄກ ຈາກ ທາງຫຼວງ ພໍສົມຄວນ ແລະ ມີຄວາມປອດໄພສູງ ຈາກ ໄພທຳມະຊາດ ແລະ ອຸປະຕິເຫດ ອື່ນໆ ພ້ອມທັງ ເປັນບ່ອນຕົບແຕ່ງ ແລະ ຂຶ້ນບັນຊີ ຈັດຊັ້ນ ຄຸນນະພາບໄມ້.

**ສະໜາມ III** : ແມ່ນ ສະຖານທີ່ທ້ອນໂຮມໄມ້ ຂອງ ໂຮງງານ ທີ່ໄດ້ຂົນສົ່ງ ມາຈາກ ສະໜາມ II ໂດຍ ໄດ້ປະຕິບັດຖືກຕ້ອງ ຕາມ ທຸກຂັ້ນຕອນ ຂອງ ລະບຽບການເຄື່ອນຍ້າຍໄມ້ຄື : ໄດ້ຈ່າຍ ຄ່າພັນທະຕ່າງໆ ຕາມ ລະບຽບການ, ໄມ້ແຕ່ລະທ່ອນ ໄດ້ມີເຄື່ອງໝາຍ ແລະ ກາປະທັບ, ມີເອກະສານເຄື່ອນຍ້າຍ ແລະ ເຄື່ອນຍ້າຍ ຕາມ ເສັ້ນທາງທີ່ໄດ້ກຳນົດໃຫ້.

**ການຂຶ້ນບັນຊີໄມ້** : ແມ່ນ ການວັດແທກ, ການບັນທຶກ ແລະ ຕີລາຄາ ຄຸນລັກສະນະຂອງໄມ້ ໂດຍ ເຈົ້າໜ້າທີ່ປ່າໄມ້ ທີ່ໄດ້ຖືກແຕ່ງຕັ້ງສະເພາະ ເຊັ່ນ : ຊະນິດໄມ້, ເບີຕົ້ນ, ເບີທ່ອນ, ໜ້າຕ້າງ ຫຼື ວັດຮອບ, ລວງຍາວ, ຈຳນວນທ່ອນ, ບໍລິມາດ ແລະ ຈັດຊັ້ນ ຄຸນນະພາບໄມ້.

**ເຈົ້າໜ້າທີ່ປ່າໄມ້** : ແມ່ນ ລັດຖະກອນ ທີ່ເຮັດວຽກ ຢູ່ໃນ ຂະແໜງການປ່າໄມ້ ຊຶ່ງມີໜ້າທີ່ ຊີ້ນຳ, ຄຸ້ມຄອງ, ກວດກາ, ກວດການ ແລະ ຈັດຕັ້ງປະຕິບັດ ວຽກງານປ່າໄມ້ ໃຫ້ຖືກຕ້ອງ ຕາມ ລະບຽບກົດໝາຍ ປ່າໄມ້.

**ການສຳຫຼວດ ຈັດສັນ** : ແມ່ນ ການສຶກສາເກັບກຳຂໍ້ມູນ ໂດຍ ແນໃສ່ ກຳນົດປະເພດປ່າ, ຂອບເຂດ ປ່າໄມ້, ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປະເມີນ ຄວາມອາດສາມາດ ຕອບສະໜອງ ບໍລິມາດໄມ້ ທີ່ຈະຂຸດຄົ້ນຕໍ່ປີ ໃນ ແຕ່ລະຄຸ້ມ. ນອກຈາກນີ້ ຍັງໄດ້ມີ ການກຳນົດເສັ້ນທາງ ຊັກລາກ, ທາງຂົນສົ່ງ, ສະໜາມໄມ້ ແລະ ທີ່ພັກຂອງພະນັກງານ, ກຳມະກອນ ພ້ອມທັງໝາຍຈຸດສຳຄັນຕ່າງໆ ລົງໃນແຜນທີ່ຢ່າງຖືກຕ້ອງ ຕາມ ຫຼັກວິຊາການ ເພື່ອການພັດທະນາຕາມຈຸດປະສົງທີ່ຕ້ອງການໃນປັດຈຸບັນແລະອະນາຄົດຢ່າງມີແຜນການ.

**ການສຳຫຼວດ ຂຸດຄົ້ນ** : ແມ່ນ ການສຶກສາຂໍ້ມູນ ເພື່ອອອກແບບ ແລະ ຄິດໄລ່ ການຂຸດຄົ້ນ ຢ່າງມີ ປະສິດທິຜົນ ໂດຍໄດ້ກຳນົດ ຕົ້ນໄມ້, ຊະນິດໄມ້ ແລະ ບໍລິມາດໄມ້ຕົວຈິງ ທີ່ຈະຖືກຕັດອອກ ໃນ ແຕ່ລະປີ, ການໝາຍຕົ້ນຕັດ, ການຕີກາຕົ້ນ, ການກຳນົດທິດລົ້ມ ເພື່ອຮັບປະກັນ ການສືບພັນ ແລະ ປົກປັກຮັກສາ ສິ່ງແວດລ້ອມ.

**ການອະນາໄມປ່າ** : ແມ່ນ ການເກັບມ້ຽນກິ່ງໄມ້ ແລະ ສິ່ງເສດເຫຼືອ ຫລັງການຂຸດຄົ້ນ ລວມທັງ ເຄືອເຂົາ ແລະ ຕົ້ນໄມ້ທີ່ບໍ່ໄດ້ມາດຖານ ແລະ ຄຸນຄ່າ ທາງດ້ານເສດຖະກິດ ແນໃສ່ເຮັດໃຫ້ ເນື້ອທີ່ຂຸດຄົ້ນ ມີເງື່ອນໄຂສະດວກໃນການຟື້ນຟູບູລະນະປ່າດ້ວຍທຳມະຊາດຫຼືການປູກຄືນ, ພ້ອມດຽວກັນນີ້ ກໍເພື່ອຫຼີກເວັ້ນ ການແຜ່ລະບາດ ຂອງພະຍາດ ແລະ ບົ້ງແມງຕ່າງໆ.

**ການສຳຫລວດຫຼັງການຂຸດຄົ້ນ** : ແມ່ນ ການສຳຫລວດ ກວດກາຄືນ ສະພາບປ່າໄມ້ ເພື່ອ ການປະເມີນຜົນ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນການຂຸດຄົ້ນ ທີ່ຜ່ານມາ.

## ໝວດທີ 1
## ,ການຂຶ້ນແຜນ ແລະ ເງື່ອນໄຂ ການຂຸດຄົ້ນໄມ້

**<u>ມາດຕາ 3</u> : ປ່າທີ່ຈະດໍາເນີນການຂຸດຄົ້ນໄມ້**

ປ່າທີ່ຈະດໍາເນີນ ການຂຸດຄົ້ນໄມ້ ຕ້ອງແມ່ນ :

1. ປ່າຜະລິດ ທີ່ໄດ້ຜ່ານ ການສໍາຫລວດວາງແຜນ ຈັດສັນ ແລະ ການສໍາຫລວດຂຸດຄົ້ນ ເປັນທີ່ຮຽບຮ້ອຍແລ້ວ ໂດຍ ໄດ້ມີການແບ່ງຄຸ້ມ, ຕອນຕັດປະຈໍາປີ ແລະ ໄດ້ຮູ້ ບໍລິມາດໄມ້ທີ່ສາມາດ ຂຸດຄົ້ນ ແລະ ຮອບວຽນການຂຸດຄົ້ນ ໂດຍອີງໃສ່ ການຄາດຄະເນ ອັດຕາການຈະເລີນເຕີບໂຕ ຕົວຈິງຂອງປ່າໄມ້ ໃນປະຈຸບັນ ເຊິ່ງໄດ້ກໍານົດໄວ້ ໃນ ແຜນການຂຸດຄົ້ນລະອຽດ ແລະ ໃນກອບ ຂອງ ແຜນການຈັດສັນລວມ ຂອງ ແຕ່ລະເຂດປ່າ ເພື່ອຮັບປະກັນ ການຂຸດຄົ້ນໄມ້ ແບບໝັ້ນຄົງຖາວອນ.
2. ເຂດທີ່ຈະທໍາ ການບຸກເບີກ ເພື່ອສ້າງ ຄອງຊົນລະປະທານ, ແລວທາງ, ແລວສາຍໄຟ, ອ່າງເຂື່ອນໄຟຟ້ານໍ້າຕົກ ແລະ ກິດຈະການອື່ນໆ ທີ່ໄດ້ຮັບອະນຸມັດ ຢ່າງເປັນທາງການ ຈາກລັດຖະບານ.

**<u>ມາດຕາ 4</u> : ການຂຶ້ນແຜນການຄຸ້ມຄອງ ໄລຍະຍາວ**

ສູນສໍາຫລວດ ແລະ ວາງແຜນປ່າໄມ້ ຂອງ ສະຖາບັນຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ ແຫ່ງຊາດ ຕ້ອງສົມທົບ ກັບ ພະແນກ ກະສິກໍາ ແລະ ປ່າໄມ້ແຂວງ, ກໍາແພງນະຄອນ ແລະ ເຂດພິເສດ ເພື່ອກະກຽມ ຂຶ້ນແຜນການຄຸ້ມຄອງ ໄລຍະຍາວ ສໍາລັບ ປ່າຜະລິດ ແຕ່ລະເຂດ ແລ້ວນໍາສະເໜີຫາ ກະຊວງ ກະສິກໍາ ແລະ ປ່າໄມ້ ພິຈາລະນາ ອະນຸມັດ.

**<u>ມາດຕາ 5</u> : ການຂຶ້ນແຜນການຂຸດຄົ້ນໄມ້**

ເຈົ້າໜ້າທີ່ ຫ້ອງການ ກະສິກໍາ ແລະ ປ່າໄມ້ເມືອງ ເປັນຜູ້ຮັບຜິດຊອບ ດໍາເນີນການສ້າງແຜນການຂຸດຄົ້ນ ໃນ ເຂດປ່າຜະລິດ ທີ່ໄດ້ຜ່ານ ການສໍາຫລວດຈັດສັນ ຈາກ ສູນສໍາຫຼວດ ແລະ ວາງແຜນປ່າໄມ້ ຂອງສະຖາບັນ ຄົ້ນຄ້ວາ ກະສິກໍາ ແລະ ປ່າໄມ້. ແຜນການຂຸດຄົ້ນໄມ້ ຕ້ອງໃຫ້ສອດຄ່ອງ ກັບ ແຜນການຄຸ້ມຄອງ ໄລຍະຍາວ ທີ່ໄດ້ຮັບອະນຸມັດ ຈາກ ກະຊວງ ກະສິກໍາ ແລະ ປ່າໄມ້. ໃນການສ້າງແຜນການດັ່ງກ່າວ ຕ້ອງໃຫ້ມີບົດວິພາກເສດຖະກິດ - ເຕັກນິກ ແລະ ໃຫ້ສໍາເລັດ ລ່ວງໜ້າ 1 ປີ ກ່ອນການຂຸດຄົ້ນ.

**ມາດຕາ 6 :** **ການຮັບຮອງເອົາ ແຜນການ ຂຸດຄົ້ນໄມ້**

1. ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດເປັນຜູ້ຮັບຮອງເອົາ ແຜນການຂຸດຄົ້ນໄມ້ ທີ່ໄດ້ລະບຸໄວ້ ໃນ ມາດຕາ 5 ຂອງ ລະບຽບການສະບັບນີ້ ເພື່ອສັງລວມ ແລ້ວນຳສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ຢ່າງຊ້າບໍ່ໃຫ້ກາຍ ວັນທີ 30 ມິຖຸນາ ຂອງທຸກປີ ເພື່ອສັງລວມ ຂໍອະນຸມັດ ຈາກ ລັດຖະບານ.
2. ສຳລັບ ແຜນການ ຂຸດຄົ້ນໄມ້ ໃນເຂດທີ່ໄດ້ລະບຸໄວ້ ໃນ ມາດຕາ 3 ຂໍ້ 2 ຂອງ ລະບຽບການສະບັບນີ້ ແມ່ນ ລັດຖະບານ ເປັນ ຜູ້ອະນຸມັດ.

**ມາດຕາ 7 :** **ຂອບເຂດ ໃນ ການອອກ ອະນຸຍາດ ຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້**

1. ກົມປ່າໄມ້ ເປັນຜູ້ສັງລວມ ແຜນການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ທົ່ວປະເທດ ນຳສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ແລ້ວນຳສະເໜີ ຂໍອະນຸມັດ ຈາກ ລັດຖະບານ. ພາຍຫຼັງ ທີ່ລັດຖະບານ ຕົກລົງອະນຸມັດ ຕົວເລກລວມ ທົ່ວປະເທດແລ້ວ ກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງອະນຸມັດ ແຜນແບ່ງປັນ ຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ປະຈຳປີ ໃຫ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.
2. ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເປັນຜູ້ອອກອະນຸຍາດໃຫ້ບຸກຄົນ ຫຼື ການຈັດຕັ້ງ ທີ່ມີເງື່ອນໄຂ ໄດ້ຮັບອະນຸຍາດຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ຕາມ ແຜນການ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ແຈ້ງໃຫ້.
3. ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ແຜນການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ພາຍໃນຂອບເຂດ ເມືອງຂອງຕົນ ຕາມແຜນການ ແລະ ການຕົກລົງ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

**ມາດຕາ 8 :** **ການປະກອບ ເອກກະສານ ເພື່ອດຳເນີນການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້**

ບຸກຄົນ ແລະ ການຈັດຕັ້ງ ທີ່ຈະໄດ້ຮັບອະນຸຍາດຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ຕ້ອງ ປະກອບ ເອກກະສານ ໃຫ້ຄົບຖ້ວນ ສະເໜີຕໍ່ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ຊຶ່ງປະກອບດ້ວຍ :

1. ໃບສະເໜີ ຂໍອະນຸຍາດ ດຳເນີນການຂຸດຄົ້ນໄມ້ ຫຼື ຜະລິດຕະພົນປ່າໄມ້.
2. ໃບອະນຸຍາດ ດຳເນີນທຸລະກິດ ແລະ ໃບທະບຽນອາກອນ.
3. ຊີວະປະຫວັດຫຍໍ້ ພ້ອມໃບຢັ້ງຢືນທີ່ຢູ່.
4. ໃບຢັ້ງຢືນ ຈາກ ທະນາຄານ ກ່ຽວກັບ ຖານະທາງດ້ານ ການເງິນ ແລະ ມີພາຫານະອຸປະກອນ ທີ່ຮັບໃຊ້ວຽກງານ ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ຢ່າງພຽງພໍ ເພື່ອຮັບປະກັນ ໃຫ້ການຈັດຕັ້ງປະຕິບັດ ສຳເລັດ ຕາມ ແຜນການ ທີ່ໄດ້ອະນຸມັດ.

5. ໃບແຈ້ງໂທດ.

6. ສັນຍາ ກ່ຽວກັບການຂຸດຄົ້ນໄມ້ ຫຼື ຜະລິດຕະພັນປ່າໄມ້ ລະຫວ່າງ ບຸກຄົນ ຫຼື ການຈັດຕັ້ງ ກັບ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕາມ ແຜນການ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ແຈ້ງໃຫ້.

6.1 ຮ່າງສັນຍາ ກ່ຽວກັບ ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ມີແບບຟອມສະເພາະ.

## ໝວດທີ 2
## ຫຼັກການ ໃນການດຳເນີນ ການຂຸດຄົ້ນໄມ້

### ມາດຕາ 9 : ການດຳເນີນ ການຂຸດຄົ້ນໄມ້

ການດຳເນີນ ການຂຸດຄົ້ນໄມ້ ຕ້ອງໄດ້ດຳເນີນສະເພາະ ຢູ່ໃນ ເຂດປ່າຜະລິດ ຊຶ່ງຖືກກຳນົດ ຢ່າງເປັນທາງການ ຈາກ ລັດຖະບານ ແລະ ໄດ້ຜ່ານ ການສຳຫລວດຈັດສັນ ແລະ ສຳຫລວດຂຸດຄົ້ນ, ໃນເຂດທີ່ໄດ້ວາງແຜນ ຄຸ້ມຄອງປ່າໄມ້ ເທົ່ານັ້ນ ແນ່ໃສ່ຮັບປະກັນ ການຂຸດຄົ້ນໄມ້ ຢ່າງຕໍ່ເນື່ອງ ແລະ ໃຫ້ສາມາດ ກັບຄືນມາ ຂຸດຄົ້ນໄດ້ອີກ ໂດຍ ປະຕິບັດ ຕາມ ລະບຽບການຕົ້ນຕໍ ດັ່ງນີ້ :

1. ນຳໃຊ້ລະບົບຕັດຍອນ ຕາມ ແຜນສຳຫລວດຈັດສັນ ແລະ ສຳຫລວດຂຸດຄົ້ນ;
2. ຕັດໄມ້ທີ່ກຳນົດໃຫ້ຕັດ ໂດຍຮັບປະກັນການສືບພັນ;
3. ຕັດໄມ້ ຕ້ອງເກັບກູ້ເອົາ ເພື່ອນຳໃຊ້ ໃຫ້ໝົດ ຄຸນຄ່າ;
4. ຕັດໄມ້ ໃຫ້ຖືກຕ້ອງ ຕາມ ເຕັກນິກວິຊາການ;
5. ຕັດໄມ້ ໂດຍຈຳກັດ ການທຳລາຍຕົ້ນໄມ້ ທີ່ຢູ່ອ້ອມແອ້ມ, ຮັບປະກັນ ບໍ່ໃຫ້ມີ ຜົນກະທົບ ຕໍ່ ສິ່ງແວດລ້ອມ, ເກີດດິນເຊາະເຈື່ອນ ຫລື ນ້ຳບົກແຫ້ງ;
6. ຕັດໄມ້ແລ້ວ ຕ້ອງອະນາໄມປ່ານັ້ນ ແລະ ປູກທົດແທນຄືນ.

### ມາດຕາ 10 : ການສ້າງທາງ ຊັກລາກ, ທາງຂົນສົ່ງ ແລະ ສະໜາມໄມ້

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ອະນຸຍາດ ຂຸດຄົ້ນໄມ້ ກ່ອນຈະດຳເນີນ ການຂຸດຄົ້ນ ຕ້ອງໄດ້ສ້າງທາງຊັກລາກ, ທາງຂົນສົ່ງ ແລະ ສະໜາມໄມ້ ໃຫ້ຖືກຕ້ອງ ຕາມ ແຜນການ ຂຸດຄົ້ນ ທີ່ໄດ້ກຳນົດໄວ້.

### ມາດຕາ 11 : ການບັ່ນທ່ອນ

1. ການບັ່ນທ່ອນໄມ້ ຕ້ອງປະຕິບັດ ຕາມ ຫຼັກວິຊາການ ແລະ ການຊີ້ນຳ ຂອງ ເຈົ້າໜ້າທີ່ປ່າໄມ້ ທີ່ລົງຄຸ້ມຄອງ ການຂຸດຄົ້ນໄມ້.

2. ໄມ້ແຕ່ລະທ່ອນ ທີ່ໄດ້ບັ່ນທ່ອນແລ້ວ ເຈົ້າໜ້າທີ່ປ່າໄມ້ ຕ້ອງແຕ້ມ ເຄື່ອງໝາຍໃສ່ໜ້າທ່ອນໄມ້ ໃຫ້ຈະແຈ້ງ ແລະ ຖາວອນ ເຊັ່ນ : ຊະນິດພັນໄມ້, ເບີຄຸ້ມ, ເບີຕົ້ນ/ເບີທ່ອນ ເປັນເລກລຽງ ຕາມ ລຳດັບ ພ້ອມທັງ ຂະໜາດ ໜ້າຕ້າງ ແລະ ລວງຍາວ ໃຫ້ລະອຽດ.

3. ເຈົ້າໜ້າທີ່ປ່າໄມ້ ທີ່ລົງຄຸ້ມຄອງ ການຂຸດຄົ້ນໄມ້ ຢູ່ ສະໜາມ I ຕ້ອງບັນທຶກ ວັນທີຕັດປ້ຳ, ຊະນິດພັນໄມ້, ເບີຄຸ້ມ, ນຳເບີຕົ້ນ, ເບີທ່ອນ, ຈຳນວນ ກິ່ງງ່າ ແລະ ເຂດຂຸດຄົ້ນ ເຂົ້າໃນບັນຊີຕັດປ້ຳ ປະຈຳແຕ່ລະວັນ ເພື່ອເປັນຂໍ້ມູນ ໃນ ການຕິດຕາມ ແລະ ກວດກາ ການຂຶ້ນບັນຊີໄມ້ ຢູ່ໃນ ສະໜາມ II.

## <u>ມາດຕາ 12</u> : ການຊັກລາກໄມ້ທ່ອນ

1. ໄມ້ທຸກທ່ອນ ຕ້ອງຖືກຊັກລາກ ອອກຈາກ ບ່ອນຕັດປ້ຳ ຕາມທາງຊັກລາກ ທີ່ໄດ້ກະກຽມໄວ້ ມາລວມໝອນ ຢູ່ສະໜາມ I ໃຫ້ຄົບຖ້ວນ ຕາມ ຈຳນວນຕົວຈິງ ຂອງ ບັນຊີໄມ້ ທີ່ໄດ້ຕັດປ້ຳ.

2. ການຊັກລາກໄມ້ ອອກຈາກ ບ່ອນຕັດປ້ຳ ມາລວມໝອນ ຢູ່ສະໜາມ I ຕ້ອງດຳເນີນໄປພ້ອມ ກັບ ການຕັດປ້ຳ ຫຼື ຢ່າງຊ້າ ບໍ່ໃຫ້ເກີນ 15 ວັນ ຫຼັງຈາກ ການຕັດປ້ຳ ແລະ ນຳໃຊ້ວິທີການ ຊັກລາກ ທີ່ແທດເໝາະ ກັບ ສະພາບ ພູມີປະເທດ ແລະ ຄວາມຄ້ອຍຊັນຂອງດິນ.

## <u>ມາດຕາ 13</u> : ການວັດແທກ ແລະ ຂຶ້ນບັນຊີໄມ້

1. ເຈົ້າໜ້າທີ່ປ່າໄມ້ ທີ່ຖືກມອບໝາຍ ໃຫ້ລົງຄຸ້ມຄອງ ການຂຸດຄົ້ນໄມ້ ຢູ່ສະໜາມ ຕ້ອງໄດ້ກວດກາ ວັດແທກຄືນ ເພື່ອຂຶ້ນບັນຊີໄມ້ ໃຫ້ຖືກຕ້ອງ ພາຍຫຼັງທີ່ໄມ້ ໄດ້ຖືກຂົນສົ່ງຮອດສະໜາມ II.

2. ການວັດແທກ ແລະ ຂຶ້ນບັນຊີໄມ້ ຕ້ອງປະຕິບັດ ຕາມ ຂໍ້ຕົກລົງ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0134/ ກປ, ລົງວັນທີ 27/02/1997 ວ່າດ້ວຍ ການນຳໃຊ້ຫຼັກການ ວັດແທກ, ຈັດຊັ້ນ ຄຸນນະພາບ ໄມ້ທ່ອນ ພາຍໃນ ແລະ ອອກຕ່າງປະເທດ.

## <u>ມາດຕາ 14</u> : ການເຄື່ອນຍ້າຍໄມ້

ການເຄື່ອນຍ້າຍໄມ້ ຕ້ອງປະຕິບັດ ຕາມລະບຽບການ ເຊັ່ນ : ຕ້ອງໄດ້ຈ່າຍ ຄ່າພັນທະຕ່າງໆ ຄົບຖ້ວນ, ໄມ້ແຕ່ລະທ່ອນ ຕ້ອງມີເຄື່ອງຫມາຍ ແລະ ປະທັບຕາ, ມີເອກະສານເຄື່ອນຍ້າຍ, ເຄື່ອນຍ້າຍ ຕາມ ເສັ້ນທາງ ທີ່ໄດ້ກຳນົດໃຫ້ ແລະ ຕ້ອງແຈ້ງ ຕໍ່ ດ່ານກວດກາ.

ມາດຕາ 15 : ບັນດາ ເຂດຕ້ອງຫ້າມ ແລະ ຂໍ້ຫ້າມ ໃນ ການດຳເນີນ ກິດຈະການຂຸດຄົ້ນໄມ້

1. ປ່າປ້ອງກັນ
2. ເຂດຫວງຫ້າມເດັດຂາດ ຂອງ ປ່າສະຫງວນ ແລະ ເຂດເຊື່ອມຕໍ່ ລະຫວ່າງ ປ່າສະຫງວນ ດ້ວຍກັນ ຫລື ລະຫວ່າງ ປ່າສະຫງວນ ແລະ ປ່າປະເພດອື່ນ
3. ເຂດຫວງຫ້າມ ທີ່ເປັນບ່ອນຄົ້ນຄວ້າ ທາງດ້ານ ວິທະຍາສາດ ແລະ ເຂດອ້ອມຂ້າງ ບໍລິເວນ ທ່ອງທ່ຽວ ທຳມະຊາດຕ່າງໆ
4. ເນື້ອທີ່ ໆ ມີຄວາມຄ້ອຍຊັນ 35 ອົງສາ ຂຶ້ນໄປ
5. ເຂດກັນຊົນ ແມ່ນໍ້າ ລຳເຊ 300 ແມັດ ລົງມາ
6. ເຂດກັນຊົນ ຫ້ວຍນໍ້າ 100 ແມັດ ລົງມາ
7. ເຂດກັນຊົນ ທາງຫຼວງແຫ່ງຊາດ ແລະ ທາງທ້ອງຖິ່ນ 100 ແມັດ ລົງມາ
8. ເຂດກັນຊົນ ຄອງຊົນລະປະທານ, ແລວສາຍໄຟຟ້າ 50 ແມັດ ລົງມາ
9. ເຂດປ່າຊາຍແດນປະເທດ 5 ກິໂລແມັດ ລົງມາ
10 ເນື້ອທີ່ໆເປັນ ຫີນປູນ, ຫີນດານ, ຊັ້ນດິນຕື້ນ ແລະ ເຂດນໍ້າຖ້ວມ ເປັນປະຈຳ.
11. ຕັດໄມ້ ແບບຮາບກ້ຽງ ເວັ້ນເສຍແຕ່ໄດ້ຮັບ ອະນຸຍາດ ຈາກ ລັດຖະບານ
12. ອອກອະນຸຍາດ ຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ກ່ອນການຈ່າຍ ຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງທົດແທນ
13. ຕັດໄມ້ ໂດຍບໍ່ໄດ້ຮັບ ອະນຸຍາດ
14. ຕັດໄມ້ ນອກເຂດ ອະນຸຍາດ
15. ຕັດໄມ້ ເກີນແຜນການ ທີ່ໄດ້ຮັບອະນຸຍາດ
16. ຕັດຕົ້ນໄມ້ແລ້ວ ປະໄວ້ ຢູ່ສະໜາມ ໄ ກາຍ 1 ເດືອນ ຫຼັງການຕັດປໍ້າ
17. ຊັກລາກໄມ້ ບໍ່ໄປ ຕາມ ແລວທີ່ໄດ້ກຳນົດໃຫ້
18. ເຄື່ອນຍ້າຍໄມ້ ໂດຍບໍ່ໄດ້ຮັບ ອະນຸຍາດ
19. ເຄື່ອນຍ້າຍໄມ້ ເກີນຈຳນວນ ທີ່ໄດ້ຮັບອະນຸຍາດ
20. ເຄື່ອນຍ້າຍໄມ້ ແຕ່ 6 ໂມງ ແລງ ຫາ 6 ໂມງເຊົ້າ ແລະ ຊ່ວງເວລາ ທີ່ມີການເກືອດຫ້າມ
21. ຂົນສົ່ງໄມ້ ເກີນນໍ້າໜັກ ທີ່ຂະແໜງການ ຄົມມະນາຄົມ - ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ໄດ້ກຳນົດໄວ້

## ໝວດທີ 3
## ການຄຸ້ມຄອງ,ກວດກາ ແລະ ປະເມີນຜົນ

ມາດຕາ 16 : ການຄຸ້ມຄອງ, ຕິດຕາມ ແລະ ກວດກາ

ພະແນກກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ,ເຂດພິເສດ ແລະ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ມີໜ້າທີ່ຮັບຜິດຊອບ ໃນ ການຄຸ້ມຄອງ, ກວດກາ, ກວດການ

ແລະ ປະເມີນຜົນ ໃນ ການດຳເນີນ ການຂຸດຄົ້ນໄມ້ ແລ້ວລາຍງານໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ຊາບ ພາຍໃນ 30 ວັນ ໂດຍຖືເອົາ ແຜນການຈັດສັນ, ແຜນການຂຸດຄົ້ນ, ສັນຍາ ຂຸດຄົ້ນ, ບັນຊີໄມ້ ທີ່ໄດ້ຕັດ ແລະ ລະບຽບ ການຂຸດຄົ້ນໄມ້ ເປັນ ເອກະສານ ອ້າງອີງ ໃນ ການຈັດຕັ້ງປະຕິບັດ.

**ມາດຕາ 17 : ເນື້ອໃນ ຂອງການກວດກາ**

ພາຍຫຼັງ ທີ່ໄດ້ປະຕິບັດ ແຜນການຂຸດຄົ້ນໄມ້ ໃນ ແຕ່ລະຈຸດ ສຳເລັດແລ້ວ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕ້ອງຮີບຮ້ອນ ແຕ່ງຕັ້ງ ເຈົ້າໜ້າທີ່ປ່າໄມ້ ລົງກວດກາ ໃນ ເນື້ອທີ່ງໄດ້ອະນຸມັດ ໃຫ້ດຳເນີນ ການຂຸດຄົ້ນ ເພື່ອ ປະເມີນຜົນ; ເນື້ອໃນຂອງການກວດກາ ຫຼັງການຂຸດຄົ້ນ ມີດັ່ງນີ້ :

1. ສັນຍາການຮັບເໝົາຂຸດຄົ້ນ
2. ເນື້ອທີ່ ໆ ທຳການຂຸດຄົ້ນ ຕົວຈິງ ຫຼື ຂອບເຂດ ທີ່ໄດ້ອະນຸມັດ ໃຫ້ຂຸດຄົ້ນ
3. ຈຳນວນຕົ້ນ ທີ່ໝາຍໃຫ້ຕັດ ໂດຍຮັບປະກັນ ການສືບພັນ ແລະ ບໍລິມາດຕົວຈິງ
4. ການນຳໃຊ້ເຕັກນິກ ໃນການຕັດປໍ້າ, ບັ່ນທ່ອນ, ຊັກລາກ ແລະ ຂົນສົ່ງ
5. ຈຳນວນໄມ້ ທີ່ປະໄວ້ ໃນ ປ່າ ເຊັ່ນ : ໄມ້ທ່ອນປ່າຍ, ໄມ້ຕົກຮອບ ແລະ ໄມ້ກິ່ງງ່າ ທີ່ ສາມາດ ນຳໃຊ້ໄດ້.
6. ຜົນກະທົບ ຕໍ່ ສະພາບແວດລ້ອມ ເຊັ່ນ : ສະພາບການເຊາະເຈື່ອນ ຂອງດິນ ແລະ ຄວາມເສຍຫາຍ ຂອງເບ້ຍໄມ້ນ້ອຍ ທີ່ສາມາດ ສືບພັນໄດ້ ໂດຍ ທຳມະຊາດ.

ສຳລັບ ປະເພດຂອງການກວດກາປ່າໄມ້ ຕ້ອງປະຕິບັດ ຕາມ ສາມປະເພດ ກວດກາດັ່ງນີ້ :

- **ກວດກາ ຕາມ ລະບົບ ປົກກະຕິ**
- **ກວດກາ ໂດຍມີການແຈ້ງການ ໃຫ້ຮູ້ລ່ວງໜ້າ**
- **ກວດກາແບບກະທັນຫັນ**

**ມາດຕາ 18 : ສິດ ແລະ ໜ້າທີ່ ຂອງ ເຈົ້າໜ້າທີ່ປ່າໄມ້ ທີ່ລົງຄຸ້ມຄອງ ການຂຸດຄົ້ນໄມ້**

ເຈົ້າໜ້າທີ່ປ່າໄມ້ ທີ່ຖືກມອບໝາຍ ໃຫ້ລົງຄຸ້ມຄອງການຂຸດຄົ້ນໄມ້ ທີ່ພາກສະໜາມ ມີໜ້າທີ່ ປະຕິບັດ ຕາມ ການຊີ້ນຳ ແລະ ການມອບໝາຍ ຈາກ ຂັ້ນເທິງຂອງຕົນ ໃນ ການຈັດຕັ້ງປະຕິບັດ ການຄຸ້ມຄອງ, ກວດກາການຂຸດຄົ້ນໄມ້ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ລະບຽບການປ່າໄມ້ ຢ່າງເຂັ້ມງວດ ແລະ ມີສິດ ກ່າວເຕືອນ, ແນະນຳ ແລະ ສັ່ງໂຈະ ການຂຸດຄົ້ນໄມ້ ຊົ່ວຄາວ ແລ້ວລາຍງານ ໃຫ້ຂັ້ນເທິງຂອງຕົນ ໂດຍດ່ວນ. ໃນ ກໍລະນີ ຜູ້ໄດ້ຮັບ ອະນຸຍາດຂຸດຄົ້ນ ດຳເນີນການ ບໍ່ຖືກຕ້ອງ ຕາມ ສັນຍາ ການຂຸດຄົ້ນໄມ້ ແລະ ປະຕິບັດ ບໍ່ຖືກຕ້ອງ ຕາມ ລະບຽບກົດໝາຍ.

# ພາກທີ II

## ການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້

**ມາດຕາ 19 : ການຂື້ນແຜນ ເພື່ອຂໍອະນຸມັດຂຸດຄົ້ນ ແລະເກັບກູ້ ຜະລິດຕະພັນປ່າໄມ້**

ການຂື້ນແຜນ ເພື່ອຂໍອະນຸມັດເກັບກູ້ ຜະລິດຕະພັນປ່າໄມ້ ປະຈໍາປີ ຕ້ອງປະຕິບັດ ຕາມ ຂັ້ນຕອນ ແລະ ກໍານົດເວລາ ທີ່ລະບຸໄວ້ໃນ ມາດຕາ 5 ຂອງ ລະບຽບການ ສະບັບນີ້.

**ມາດຕາ 20 : ການຈັດຕັ້ງປະຕິບັດ ແຜນການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້**

ການຈັດຕັ້ງປະຕິບັດ ແຜນການຂຸດຄົ້ນ ແລະ ເກັບກູ້ຜະລິດຕະພັນປ່າໄມ້ ແຕ່ລະ ປະເພດ ຕ້ອງປະຕິບັດ ດັ່ງນີ້ :

1. ປະເພດ ຜະລິດຕະພັນປ່າໄມ້ ທີ່ບໍ່ຂື້ນກັບລະດູການ ຕ້ອງປະຕິບັດ ຕາມ ແຜນການອະນຸມັດ ຂອງ ກະຊວງ ກະສິກໍາ ແລະ ປ່າໄມ້ ແລະ ຕາມ ແຜນການຈັດສັນ ຂອງ ແຕ່ລະປະເພດປ່າ ແລະ ເຂດທີ່ໄດ້ອະນຸຍາດໃຫ້ຂຸດຄົ້ນ.
2. ປະເພດ ຜະລິດຕະພັນປ່າໄມ້ ທີ່ຂື້ນກັບລະດູການ ຕ້ອງອີງໃສ່ ຄວາມອາດສາມາດ ຂຸດຄົ້ນ ແລະ ເກັບກູ້ຕົວຈິງ ຂອງ ແຕ່ລະຊະນິດ ບົນຫຼັກການ ການນໍາໃຊ້ ແບບເກັບກູ້ ທີ່ບໍ່ເປັນ ລັກສະນະດັບສູນ.

**ມາດຕາ 21 : ຫຼັກການ ໃນການຈັດຕັ້ງປະຕິບັດ ການຂຸດຄົ້ນ ແລະເກັບກູ້ ຜະລິດຕະພັນປ່າໄມ້**

ການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ແຕ່ລະຊະນິດ ຕ້ອງປະຕິບັດ ຕາມ ແຜນການ ທີ່ໄດ້ອະນຸມັດ, ຕາມ ສັນຍາ, ຕາມເຂດທີ່ອະນຸຍາດໃຫ້ ແລະ ບົດແນະນໍາ ທາງ ດ້ານເຕັກນິກ ວິຊາການ ຢ່າງເຂັ້ມງວດ.

**ມາດຕາ 22 : ບັນດາຂໍ້ຫ້າມ ໃນ ການດໍາເນີນ ການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້**

1. ຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ທຸກຊະນິດ ແບບລັກສະນະດັບສູນ.
2. ຂຸດຄົ້ນໄມ້ປ່ອງ ທີ່ມີອາຍຸ ຕໍ່າກ່ວາ 3 ປີ ແລະ ຫ້າມຕັດກົ່ງ ແບບໝົດສຸມ.
3. ຂຸດຄົ້ນຫວາຍ ແລະ ປະເພດ ທີ່ເປັນເຄືອ ດ້ວຍ ວິທີການ ຕັດປໍ້າຕົ້ນໄມ້ ທີ່ເຄືອ ເກາະກົ່ງຢູ່.
4. ຂຸດຄົ້ນ ຜະລິດຕະພັນ ປ່າໄມ້ ປະເພດໃຫ້ໝາກ,ດອກ ແລະ ໃບ ດ້ວຍ ວິທີການຕັດປໍ້າ ຕົ້ນໄມ້ ເຊັ່ນ : ໝາກຈອງ, ໝາກຂາມແພບ, ດອກເຜີ້ງ ແລະ ອື່ນ ໆ.
5. ຂຸດຄົ້ນ ຜະລິດຕະພັນປ່າໄມ້ ປະເພດໃຫ້ເປືອກ ດ້ວຍ ວິທີການປອກ ອ້ອມຮອບຕົ້ນໄມ້ ເຊັ່ນ : ສີສຽດ, ເປືອກບົງ, ເປືອກເມືອກ ແລະ ອື່ນ ໆ.
6. ຂຸດຄົ້ນ ຜະລິດຕະພັນປ່າໄມ້ ປະເພດໃຫ້ນໍ້າມັນ ແລະ ຢາງ ດ້ວຍວິທີການເອົາໄຟຈູດ ຫຼື

ເອົາທາດເຄມີ ອື່ນ ໆໃສ່ ເພື່ອເລັ່ງ ໃຫ້ນ້ຳມັນ ແລະ ຢາງອອກ ຢ່າງຫຼວງຫຼາຍ ບາດດຽວ ແລ້ວ ເຮັດໃຫ້ຕົ້ນໄມ້ນັ້ນຕາຍ ເຊັ່ນ : ນ້ຳມັນຍາງ, ຢາງແປກ, ຍານ ແລະ ອື່ນ ໆ.

7. ຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ປະເພດໃຫ້ ຮາກ, ຫົວ, ຍອດ ແລະ ໜໍ່ ໝົດບາດດຽວ ໃນເຫງົ້າ, ສຸມ ຫຼື ກໍເຫຼົ່ານັ້ນ ເຊັ່ນ : ໜໍ່ໄມ້, ຮາກຕົ້ນຮຸ່ງ, ຫົວກະບຸກ ແລະ ອື່ນໆ.

**ມາດຕາ 23 : ການອອກອະນຸຍາດ, ການຄຸ້ມຄອງ ແລະ ການກວດກາ**

ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເປັນຜູ້ອອກອະນຸຍາດໃຫ້ຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ບົນພື້ນຖານ ແຜນການອະນຸມັດ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ທັງເປັນຜູ້ຈັດຕັ້ງປະຕິບັດ ໂດຍກົງ ໃນການຄຸ້ມຄອງ, ກວດກາ, ຕິດຕາມ ການເຄື່ອນໄຫວ ຈັດຕັ້ງປະຕິບັດ ແຜນການດັ່ງກ່າວ. ເມື່ອອາຍຸການ ນຳໃຊ້ ຂອງ ໃບອະນຸຍາດຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ໄດ້ໝົດກຳນົດແລ້ວ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະເຂດພິເສດ ຕ້ອງມີຄຳສັ່ງ ເພື່ອ ເຮັດແຈ້ງການ ລົບລ້າງ ໃບອະນຸຍາດ ດັ່ງກ່າວທັນທີ.

**ມາດຕາ 24 : ການກວດກາ ແລະ ປະເມີນຜົນ ຫຼັງການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້**

ພາຍຫຼັງສຳເລັດ ແຜນການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ໃນແຕ່ລະເຂດແລ້ວ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕ້ອງແຕ່ງຕັ້ງເຈົ້າໜ້າທີ່ປ່າໄມ້ຂອງຕົນ ລົງກວດກາ ຫຼັງການຂຸດຄົ້ນ ເພື່ອກວດກາ ປະເມີນຜົນ ແລ້ວເຮັດບົດລາຍງານ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ຮັບຊາບ ພາຍໃນ 30 ວັນ. ເນື້ອໃນ ແລະປະເພດ ການກວດກາ ຕ້ອງປະຕິບັດ ຕາມ ມາດຕາ 17 ຂອງ ລະບຽບການ ສະບັບນີ້.

## ພາກທີ III

## ພັນທະຂອງຜູ້ຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້, ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕາການ ຕໍ່ຜູ້ລະເມີດ ລະບຽບການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້

ມາດຕາ 25 : ພັນທະ ຂອງຜູ້ຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ອະນຸຍາດຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ຕ້ອງປະຕິບັດພັນທະຂອງຕົນດັ່ງນີ້ :

ນຳໃຊ້ ທຸກວິທີການ ເພື່ອ ປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອຸດົມສົມບູນ ຕະຫລອດໄປ.

2. ເສຍຄ່າ ພັນທະ ແລະ ຄ່າທຳນຽມ ປ່າໄມ້ຕ່າງໆ ຕາມ ລະບຽບກົດໝາຍ.

3. ຕ້ອງປະຕິບັດ ຕາມ ແຜນການ ແລະ ສັນຍາ ທີ່ໄດ້ເຊັນຮັບຮອງ ກັບ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ບ່ອນທີ່ໄດ້ຮັບ ອະນຸຍາດໃຫ້ ດຳເນີນ ການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ເພື່ອຮັບປະກັນ ເຮັດໃຫ້ ການຈັດຕັ້ງປະຕິບັດ ການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ທ່ວງທັນ ກັບ ລະດູການ, ການນຳເອົາໄມ້ ທີ່ຂຸດຄົ້ນ ອອກຈາກ ປ່າ ມາເຕົ້າໂຮມໄວ້ ຢູ່ ສະໜາມ II ໃຫ້ຄົບຖ້ວນ, ການອະນາໄມປ່າ ຫຼັງການຂຸດຄົ້ນ ແລະ ການປົກປັກ ຮັກສາ ສິ່ງແວດລ້ອມ ໃຫ້ຖືກຕ້ອງ ຕາມ ລະບຽບການ.

4. ລາຍງານ ແລະ ໃຫ້ຂໍ້ມູນ ກ່ຽວກັບການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ໃຫ້ແກ່ ເຈົ້າໜ້າທີ່ ຄຸ້ມຄອງປ່າໄມ້, ພະແນກ ກະສິກຳປ່າໄມ້ແຂວງ, ກຳແພງ ນະຄອນ, ເຂດພິເສດ ແລະ ກະຊວງ ກະສິກຳ ແລະ ປ່າໄມ້.

<u>ມາດຕາ 26</u> : ນະໂຍບາຍ ຕໍ່ ຜູ້ມີຜົນງານ

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ອະນຸຍາດຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຖ້າ ປະຕິບັດ ຖືກຕ້ອງ ຕາມ ລະບຽບກົດໝາຍ, ຕາມ ສັນຍາ ແລະ ແຜນການ ທີ່ອະນຸມັດ ໃຫ້ດຳເນີນການ ຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ຈະໄດ້ຮັບ ການຍ້ອງຍໍ ຈາກ ອົງການຈັດຕັ້ງຂອງລັດ ແຕ່ລະຂັ້ນ ອາດຈະໄດ້ຮັບ ພິຈາລະນາ ເປັນກໍລະນີ ພິເສດ ເມື່ອມີ ການສະເໜີ ຂໍອະນຸຍາດ ຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ໃຫ້ລັດ ໃນ ປີຕໍ່ໄປ.

<u>ມາດຕາ 27</u> : ມາດຕາການ ຕໍ່ຜູ້ລະເມີດ

1. ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ອະນຸຍາດ ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຖ້າ ປະຕິບັດ ບໍ່ຖືກຕ້ອງ ຕາມ ມາດຕາ 25 ແລະ 26 ຂອງ ກົດໝາຍປ່າໄມ້ ແລະ ລະບຽບການ ຄຸ້ມຄອງການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ສະບັບນີ້ ຈະຖືກປະຕິບັດ ມາດຕະການ ຕາມ ມາດຕາ 70, 71, 72 ແລະ 73 ຂອງ ກົດໝາຍປ່າໄມ້.

2. ການຕັດໄມ້ຫວງຫ້າມ 1; 2 ແລະ ໄມ້ຄຸ້ມຄອງ 1; 2; 3 ໂດຍ ບໍ່ໄດ້ຮັບ ອະນຸຍາດ ຈະຖືກ ປັບໃໝ 2 ເທົ່າ ຂອງມູນຄ່າ ພັນທະໄມ້ ແຕ່ລະຊະນິດ.

3. ການຕັດ,ການຊັກລາກໄມ້ ທີ່ເຮັດໃຫ້ມີການທຳລາຍຕົ້ນໄມ້ນ້ອຍ, ຕົ້ນໄມ້ທີ່ສາມາດ ສືບພັນ ໂດຍ ທຳມະຊາດ ແລະ ເຮັດໃຫ້ມີ ການເຊາະເຈື່ອນຂອງດິນ ໃນ ເນື້ອທີ່ໆ ອະນຸຍາດ ໃຫ້ດຳ ເນີນການຂຸດຄົ້ນ ຈະຖືກປັບໃໝ ຕາມ ມູນຄ່າ ຂອງການເສຍຫາຍ ຕາມ ທີ່ຄະນະກຳມະ ການ ກວດກາ ປະເມີນຜົນ ຕີລາຄາໄວ້.

4. ການເຈດຕະນາ ບໍ່ປະຕິບັດ ການອະນາໄມປ່າ ຫຼັງການຂຸດຄົ້ນ ຈະຖືກປັບໃໝ10% ຂອງ ມູນຄ່າ ພັນທະໄມ້ ທີ່ຂຸດຄົ້ນ ຈາກ ຕອນຕັດນັ້ນ.

5. ບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ປະຕິບັດຕາມ ມາດຕາ 15 ຂອງລະບຽບການ ສະບັບນີ້ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າພັນທະໄມ້ ຫຼື ມູນຄ່າ ຂອງຜົນເສັຍຫາຍ ຕາມການຕີລາຄາ ຂອງຄະນະກຳມະການກວດກາ.

6. ບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ປະຕິບັດຕາມ ມາດຕາ 22 ຂອງ ລະບຽບການ ສະບັບນີ້ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າ ຊື້ - ຂາຍ ຕົວຈິງ ຫລື ມູນຄ່າ ຊັບພະຍາກອນ ທີ່ຖືກທຳລາຍ ພ້ອມທັງ ຮິບມາເປັນຂອງລັດ.

## ພາກທີ IV
## ບົດບັນຍັດ ສຸດທ້າຍ

**ມາດຕາ 28 : ການຈັດຕັ້ງປະຕິບັດ**

ທຸກໆກະຊວງ, ອົງການທຽບເທົ່າ, ແຂວງ, ກຳແພງນະຄອນແລະເຂດພິເສດ, ທຸກພາກສ່ວນເສດຖະກິດ ລວມທັງ ບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ພ້ອມກັນ ປະຕິບັດ ຕາມ ລະບຽບການ ສະບັບນີ້ ໃຫ້ເຂັ້ມງວດ.

**ມາດຕາ 29 : ຜົນສັກສິດ**

ລະບຽບການ ສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະ ກົດລະບຽບ ທີ່ໄດ້ປະກາດໃຊ້ ໃນເມື່ອກ່ອນ ຫາກຂັດກັບ ລະບຽບການ ສະບັບນີ້ ແມ່ນຖືກລົບລ້າງ ໄປໃນຕົວ.

ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສ່ຽນ ສະພົງທອງ